**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214013-14

ເລກທີ 3853/ກອຢ

ນະຄອນຫຼວງວຽງຈັນ, ວັນທີ 19 APR 2023

**ໜັງສືແຈ້ງການ**

**ຮຽນ:** ທ່ານ ຫົວໜ້າພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຕິດຕາມກວດກາ ແລະ ເຝົ້າລະວັງກ່ຽວກັບການນຳເຂົ້າຢາ ແລະ ຜະລິດຕະພັນການແພດ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ການຈໍລະຈອນຈຳໜ່າຍຜະລິດຕະພັນປ້ອງກັນໂຄວິດ-19 ທີ່ຕ່ຳກວ່າມາດຕະຖານ.

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ການຕິດຕາມກວດກາການນຳເຂົ້າຢາ ແລະ ຜະລິດຕະພັນການແພດທີ່ດ່ານນຳເຂົ້າ;
- ອີງຕາມ ຜົນການລົງຕິດຕາມ, ກວດກາຜະລິດຕະພັນປ້ອງກັນໂຄວິດ-19 ຢູ່ນະຄອນຫຼວງວຽງຈັນ ແລະ 4 ແຂວງໃນລະຫວ່າງວັນທີ 17 ຕຸລາ - 02 ທັນວາ 2022.

ຜ່ານການຕິດຕາມກວດກາການນຳເຂົ້າຢາ ແລະ ຜະລິດຕະພັນການແພດ ທີ່ດ່ານນຳເຂົ້າ ແລະ ຜົນການລົງຕິດຕາມກວດກາຜະລິດຕະພັນປ້ອງກັນໂຄວິດ-19 ຢູ່ນະຄອນຫຼວງວຽງຈັນ ແລະ 4 ແຂວງໃນລະຫວ່າງວັນທີ 17 ຕຸລາ ຫາ ວັນທີ 02 ທັນວາ 2022 ເຫັນວ່າ ມີການນຳເຂົ້າຢາແກ້ໄອຊະນິດນ້ຳເຊື່ອມຈາກປະເທດໄທ ແລະ ຜະລິດຕະພັນເສີມສຸຂະພາບຈາກ ສສ ຫວຽດນາມ ທີ່ບໍ່ຖືກຕ້ອງຕາມລະບຽບການເປັນຈຳນວນຫຼວງຫຼາຍ ເຊິ່ງຜະລິດຕະພັນຢາດັ່ງກ່າວບໍ່ໄດ້ຮັບການຂຶ້ນທະບຽນໃນ ສປປ ລາວ ແລະ ນຳເຂົ້າໂດຍບໍ່ໄດ້ຮັບອະນຸຍາດ, ຜ່ານການປະສານກັບພາກສ່ວນກ່ຽວຂ້ອງ ພົບວ່າຢາແກ້ໄອນ້ຳເຊື່ອມ ຊື່ຜະລິດຕະພັນ DATISSIN ມີສະພາບການຈໍລະຈອນຈຳໜ່າຍຜະລິດຕະພັນຢາປອມ ແລະ ນຳໃຊ້ໃນທາງທີ່ບໍ່ຖືກຕ້ອງຕາມຂໍ້ບົ່ງໃຊ້ຂອງຜະລິດຕະພັນດັ່ງກ່າວ ໃນປະເທດເພື່ອນບ້ານ. ນອກຈາກນັ້ນ ສຳລັບການລົງຕິດຕາມ, ກວດກາຜະລິດຕະພັນປ້ອງກັນໂຄວິດ-19 ຢູ່ນະຄອນຫຼວງວຽງຈັນ ແລະ 4 ແຂວງ ຍັງພົບເຫັນການຈໍລະຈອນຈຳໜ່າຍຜະລິດຕະພັນຜ້າອັດປາກ-ດັງ ແລະ ເຈວລ້າງມືຂ້າເຊື້ອ ທີ່ຕ່ຳກວ່າມາດຕະຖານ (ລາຍລະອຽດດັ່ງເອກະສານຄັດຕິດ). ຕໍ່ກັບສະພາບການດັ່ງກ່າວ, ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງພະແນກສາທາລະນະສຸກນະຄອນຫຼວງ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ຈົ່ງຊີ້ນຳຕໍ່ຂະແໜງອາຫານ ແລະ ຢານະຄອນຫຼວງ-ແຂວງ ແລະ ໜ່ວຍງານອາຫານ ແລະ ຢາ ເມືອງຢູ່ໃນຂອບເຂດຮັບຜິດຊອບຂອງຕົນຄືດັ່ງລຸ່ມນີ້:

1. ສືບຕໍ່ເອົາໃຈໃສ່ຕິດຕາມກວດກາການນຳເຂົ້າ ແລະ ຈໍລະຈອນຈຳໜ່າຍຜະລິດຕະພັນປ້ອງກັນໂຄວິດ-19 ເພື່ອຮັບປະກັນ ຄວາມປອດໄພຂອງຜູ້ບໍລິໂພກ.
2. ເອົາໃຈໃສ່ຕິດຕາມກວດກາການນຳເຂົ້າຢູ່ດ່ານ ແລະ ການຈໍລະຈອນຈຳໜ່າຍ ຖ້າພົບເຫັນການນຳເຂົ້າ ແລະ ຈໍລະຈອນຈຳໜ່າຍທີ່ບໍ່ຖືກຕ້ອງຕາມລະບຽບການແມ່ນໃຫ້ຍຶດ, ປັບໄໝຕາມມູນຄ່າຂອງຜະລິດຕະພັນ ແລະ ເກັບຮັກສາໄວ້ຂະແໜງອາຫານ ແລະ ຢາ ພ້ອມທັງບັນທຶກເກັບກຳຂໍ້ມູນໃນການສະໜອງ ແລະ ແຫຼ່ງທີ່ມາລະອຽດ ແລ້ວລາຍງານມາຍັງກອງກວດກາອາຫານ ແລະ ຢາ ເພື່ອສັງລວມ, ວາງມາດຕະການ ແລະ ລາຍງານຂັ້ນເທິງເພື່ອຂໍທິດຊີ້ນຳ ແລະ ດຳເນີນການທຳລາຍຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວຫາວົງ

ເອກະສານຄັດຕິດແຈ້ງການສະບັບເລກທີ 3853/ກອຢ ລົງວັນທີ 19 ເມສາ 2023

## ຜະລິດຕະພັນຜ້າອັດປາກ-ດັງທີ່ຕົກມາດຕະຖານ ຈຳນວນ 16 ລາຍການ

| ລ/ດ | ຊື່ຜະລິດຕະພັນ | ຂະໜາດ ບັນຈຸ | ຮູບ ແບບ | Lot | ວ/ດ/ປ ຜະລິດ | EXP | ຮ/ງຜະລິດ | ປະເທດ | ຮູບພາບ |
|---|---|---|---|---|---|---|---|---|---|
| 1 | TRUE CARE | 40P/BOX | ແຜ່ນ | 6502005PR | 4-Feb-22 | 10-Feb-26 | TRUE LINE MED | THAILAND |   |
| 2 | SONG AN FACE MASK | 50P/BOX | ແຜ່ນ | 01SA012022 | 10-Jan-22 | 10-Jan-25 | SONG AN VIETNAM COMPANY | VIETNAM |   |
| 3 | JAYKAL MEDCO | 50P/BOX | ແຜ່ນ | N/A | N/A | N/A | ບໍລິສັດເຈໂຄ ແມັດໂຄ | LAOS |  |
| 4 | KIMSORA KHAU TRANG 3LOP | 50P/BOX | ແຜ່ນ | N/A | N/A | N/A | KIMSORA COMPANY | VIETNAM |  |
| 5 | VIETTIEN VINA MASK (KF94) | 10P/BAG | ແຜ່ນ | N/A | 01-Nov-21 | 01-Nov-24 | CONG TY TNHH&TM VIETTIEN VINA MASK | VIETNAM |   |

| | | | | | | | | | |
|---|---|---|---|---|---|---|---|---|---|
| 6 | DANAMECO MEDICAL FACE MASK | 50P/BOX | ແຜ່ນ | 5.201E+09 | 24-Oct-21 | 24-Oct-24 | CONG TY CO PHAN Y TE DANAMECO | VIETNAM |  |
| 7 | NEXT HEALTH 3LAYERS | 50P/BOX | ແຜ່ນ | 6410018PR | 12-Oct-21 | 08-Sep-26 | TRUE LINE MED | THAILAND |  |
| 8 | KICHY MEDICAL MASK | 50P/BOX | ແຜ່ນ | 2021.04.A8 | 15-Oct-21 | 15-Oct-24 | KICHY VIETNAM (BS VIETNAM) | VIETNAM |   |
| 9 | EASY TO USE TRUE CARE | 50P/BOX | ແຜ່ນ | 6407027PR | 20-Jul-21 | 10-Feb-26 | TRUE LINE MED | THAILAND |  |
| 10 | LOTUS DORE | 50P/BOX | ແຜ່ນ | N/A | 1-Aug-20 | 1-Aug-22 | QUANG MINH | VIETNAM |   |
| 11 | TP KHAU TRANG 4 LOP (MASK PLUS) | 50P/BOX | ແຜ່ນ | N/A | 1-Dec-20 | 1-Dec-23 | TP KHAU TRANG | VIETNAM |  |

| | | | | | | | | | |
|---|---|---|---|---|---|---|---|---|---|
| 12 | 50 D-CARE | 50P/BOX | ແຜ່ນ | 0710520720 | 12-Aug-20 | 12-Aug-23 | DANAMECO MEDICAL JOINT STOCK COPORATION | VIETNAM |   |
| 13 | KID FACE MASK | 50P/BOX | ແຜ່ນ | N/A | N/A | N/A | KIM SORA COMPANY | VIETNAM |   |
| 14 | NEW SKY | 50P/BOX | ແຜ່ນ | N/A | 03/2022 | 03/2025 | NEWSKY GROUP JOINT STOCK | VIETNAM |   |
| 15 | NGAN HA | 50P/BOX | ແຜ່ນ | N/A | 02/2021 | 02/2024 | CONG TY | VIETNAM |   |
| 16 | SONHA MASK | 50P/BOX | ແຜ່ນ | N/A | 1-Dec-21 | 1-Dec-24 | CONG TY PHAN SAN XUAT & THUONG MAI QUOC TE SON HA | VIETNAM |   |

- ຜົນວິໄຈຜະລິດຕະພັນເຫຼົ້າ ທີ່ຕົກມາດຕະຖານ ຈຳນວນ 01 ລາຍການ

| ລ/ດ | ຊື່ຜະລິດຕະພັນ | ຂະໜາດບັນຈຸ | ຮູບແບບ | ປະລິມານເຫຼົ້າທີ່ລະບຸໃນສະຫຼາກ | Lot | ວ/ດ/ປ ຜະລິດ | EXP | ຮ/ງຜະລິດ | ປະເທດ | ຮູບພາບ |
|---|---|---|---|---|---|---|---|---|---|---|
| 1 | SUKHO HAND SANITIZER SPRAY | 1000ML | SOLUTION | ETHYL ALCOHOL 75% V/V | no 3/2 | 19-Nov-21 | 19-Nov-24 | ບໍລິສັດ ພິລະດົນ ມາເກັດຕິ້ງ | THAILAND |   |

- ຜົນວິໄຈຜະລິດຕະພັນເຈວຂ້າເຊື້ອ ທີ່ຕົກມາດຕະຖານ ຈຳນວນ 05 ລາຍການ

| ລ/ດ | ຊື່ຜະລິດຕະພັນ | ຂະໜາດບັນຈຸ | ຮູບແບບ | ປະລິມານເຫຼົ້າທີ່ລະບຸໃນສະຫຼາກ | Lot | ວ/ດ/ປ ຜະລິດ | EXP | ຮ/ງຜະລິດ | ປະເທດ | ຮູບພາບ |
|---|---|---|---|---|---|---|---|---|---|---|
| 1 | SIRUINI | 120ML | GEL | 75% | N/A | Mar-20 | 1-Mar-23 | N/A | CHINA | 6  |
| 2 | PRUKSAPORN | 300ML | GEL | 61.09% | 73-1-6300015168 | 29/03/2021 | 29/03/2021 | | |  |
| 3 | A-CLEAN | 100ML | GEL | 90% | - | - | - | ບໍລິສັດເອເຊຍພາວເວີ້ລາວ | LAOS | 6  |

| | | | | | | | | | | | |
|---|---|---|---|---|---|---|---|---|---|---|---|
| 4 | MLC | 500ML | GEL | 67.45% | 20.1.6300020070 | 04/2021 | 04/2023 | - | THAILAND |  | |
| 5 | PRUKSAPORN | 300ML | GEL | ETHYL ALCOHOL | - | 20-Sep-21 | 19-Sep-24 | RAY (THAILAND) CO.,LTD | THAILAND |  | |

➢ **ຜະລິດຕະພັນຢາແກ້ໄອນ້ຳເຊື່ອມ DATISSIN ທີ່ມີສະພາບການນຳເຂົ້າບໍ່ຖືກຕ້ອງ**

